| ເຊເລນຽມ<br>Selenium | Se | 0.01 | mg/L |
| ເງິນ<br>Silver | Ag | 0.05 | mg/L |
| ຊັນເຟດ<br>Sulphate | $SO_4^{2-}$ | 250 | mg/L |
| ສັງກະສີ<br>Zinc | Zn | 5.0 | mg/L |
| ຟູອໍໄລດ໌<br>Fluoride | $F^-$ | 1.5 | mg/L |

ຕໍ່ ຕາຕະລາງ 13

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ | ຫົວໜ່ວຍ |
|---|---|---|---|
| ອະລູມິນຽມ<br>Aluminium | Al | 0.2 | mg/L |
| ອັລຄີນເບັນຊີນ ຊັນໂຟເນດ<br>Alkylbenzenesulfonate | $C_{18}H_{29}NaO_3S$ | 0.2 | mg/L |
| ໄຊຢາໄນດ໌<br>Cyanide | $CN^-$ | 0.07 | mg/L |
| ເຊື້ອໂຄລິຟອມ<br>Coliform Bacteria | ບໍ່ໄດ້ກຳນົດ | 2.2 | MPN/100 $cm^3$ |
| ເຊື້ອອີໂຄໄລ<br>*E.coli* Bacteria | ບໍ່ໄດ້ກຳນົດ | ຕ້ອງບໍ່ມີ | MPN/100 $cm^3$ |
| ເຊື້ອຈຸລິນຊີທີ່ເຮັດໃຫ້ເກີດພະຍາດ<br>Pathogen Bacteria | ບໍ່ໄດ້ກຳນົດ | ຕ້ອງບໍ່ມີ | MPN/100 $cm^3$ |

**ມາດຕາ 14 ມາດຕະຖານຄວບຄຸມມົນລະພິດທາງນ້ຳ**

ມາດຕະຖານຄວບຄຸມມົນລະພິດທາງນ້ຳ ແມ່ນຄ່າກຳນົດລະດັບຄວາມເຂັ້ມຂຸ້ນສູງສຸດ ຂອງທາດເຄມີ ແລະ ສິ່ງເຈືອປົນໃນນ້ຳເສຍ ທີ່ຜ່ານຂະບວນການບຳບັດ ແລະ ການເຈືອຈາງ (Dilution) ອອກສູ່ແຫຼ່ງນ້ຳສາທາ ລະນະ ຫຼື ແຫຼ່ງນ້ຳທຳມະຊາດ ແລະ ເພື່ອຮັບປະກັນບໍ່ເຮັດໃຫ້ເກີດອັນຕະລາຍແລະ ສິ່ງຜົນກະທົບຕໍ່ ຊີວິດ, ສຸ ຂະພາບຂອງ ຄົນ, ສັດ ແລະ ສິ່ງແວດລ້ອມ ຕາມຄ່າມາດຕະຖານຄວບຄຸມມົນລະພິດທາງນ້ຳ ກຳນົດໄວ້ດັ່ງລຸ່ມນີ້:

**ຕາຕະລາງ 14: ມາດຕະຖານຄວບຄຸມມົນລະພິດທາງນ້ຳ ຈາກໂຮງງານທົ່ວໄປ**

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ ທີ່ອະນຸຍາດໃຫ້ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ຄວາມເປັນ ກົດ - ດ່າງ<br>potential of Hydrogen | pH | 6-8.5 | ບໍ່ໄດ້ກຳນົດ | pH Meter |
| ທາດແຂງລະລາຍໃນນ້ຳ<br>Total Dissolved Solid | TDS | ບໍ່ໃຫ້ເກີນ 2,500 mg/L ຂຶ້ນກັບ ປະເພດ ຂອງອຸດສາຫະກຳ ແລະ ແຫຼ່ງຮັບນ້ຳ ແຕ່ບໍ່ໃຫ້ເກີນ 5,000 mg/l. | mg/L | Dry evaporation at temperature 103-105 °C, 1 hour |
| ທາດແຂງແຂວນລອຍ<br>Total Suspended Solid | TSS | ບໍ່ໃຫ້ເກີນ50 mg/L ຂຶ້ນກັບ ປະເພດ ຂອງອຸດສາຫະກຳ ແລະ ແຫຼ່ງຮັບນ້ຳ ແຕ່ບໍ່ໃຫ້ເກີນ 150 mg/L | mg/L | Glass Fiber Filter Disc |
| ອຸນຫະພູມ<br>Temperature | t | ບໍ່ໃຫ້ເກີນ 40 | °C | Temperature Meter |
| ສີ ແລະ ກິ່ນ<br>Color and Odor | ບໍ່ໄດ້ກຳນົດ | ຕ້ອງບໍ່ປະກົດ | ບໍ່ໄດ້ກຳນົດ | General |

ຕໍ່ ຕາຕະລາງ 14

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ ທີ່ອະນຸຍາດໃຫ້ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ໄຮໂດຣເຈນຊັລໄຟດ໌ Hydrogen Sulfide | $H_2S$ | ບໍ່ໃຫ້ເກີນ 1.0 | mg/L | Titration |
| ໄຊຍາໄນດ໌ Cyanide | $CN^-$ | ບໍ່ໃຫ້ເກີນ 0.2 | mg/L | Distillation and Pyridine Barbituric Acid |
| ນ້ຳມັນ ແລະ ໄຂມັນ Fat, Oil and Grease | FOG | ບໍ່ໃຫ້ເກີນ 5.0 mg/L ຂຶ້ນກັບ ປະເພດ ຂອງອຸດສາຫະກຳ ແລະ ແຫຼ່ງຮັບນ້ຳ ແຕ່ບໍ່ໃຫ້ເກີນ 15.0 mg/L | mg/L | Solvent Extraction by Weight |
| ຟໍມານດີໄຮດ໌ Formaldehyde | $CH_2O$ | ບໍ່ໃຫ້ເກີນ1.0 | mg/L | Spectrophotometry |
| ເຟໂນລ Phenol | $C_6H_5OH$ | ບໍ່ໃຫ້ເກີນ1.0 | mg/L | Distillation and Aminoantipyrine Method 4 |
| ຄຼໍລີນ Chlorine | $Cl^-$ | ບໍ່ໃຫ້ເກີນ1.0 | mg/L | Lodometric Method |
| ຢາປາບສັດຕູພືດ Pesticide | - | ຕ້ອງບໍ່ໃຫ້ມີ | mg/L | GC |
| ບີໂອດີ Biological Oxygen Demand 5 Days | $BOD_5$ | ບໍ່ໃຫ້ເກີນ 30 mg/L ຂຶ້ນກັບ ປະເພດ ຂອງອຸດສາຫະກຳ ແລະ ແຫຼ່ງຮັບນ້ຳ ແຕ່ບໍ່ໃຫ້ເກີນ 60 mg/L | mg/L | Azide Modification at 20 °C, 5 days |
| ໄນໂຕຣເຈນລວມ Total Nitrogen | TKN | ບໍ່ໃຫ້ເກີນ 100 mg/L ຂຶ້ນກັບ ປະເພດ ຂອງອຸດສາຫະກຳ ແລະ ແຫຼ່ງຮັບນ້ຳ ແຕ່ບໍ່ໃຫ້ເກີນ 200 mg/L | mg/L | Kjeldahl |
| ຊີໂອດີ Chemical Oxygen Demand | COD | ບໍ່ໃຫ້ເກີນ120 mg/L ຂຶ້ນກັບ ປະເພດ ຂອງອຸດສາຫະກຳ ແລະ ແຫຼ່ງຮັບນ້ຳ ແຕ່ບໍ່ໃຫ້ເກີນ 400 mg/L | mg/L | Potassium Dichromate Digestion ; Open Reflux or Closed Reflux |
| **ໂລຫະໜັກ (Heavy metals)** | | | | |
| ສັງກະສີ Zinc | Zn | ບໍ່ໃຫ້ເກີນ 5.0 | mg/L | AA/AES; ICP |
| ໂຄຼມຽມ 6 Chromium Hexavalent | $Cr^{+6}$ | ບໍ່ໃຫ້ເກີນ 0.25 | mg/L | |
| ໂຄຼມຽມ 3 Chromium Trivalent | $Cr^{+3}$ | ບໍ່ໃຫ້ເກີນ 0.75 | mg/L | |

ຕໍ່ ຕາຕະລາງ 14

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ ທີ່ອະນຸຍາດໃຫ້ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ທອງ<br>Copper | Cu | ບໍ່ໃຫ້ເກີນ 2.0 | mg/L | AA/AES; ICP |
| ແຄັດມຽມ<br>Cadmium | Cd | ບໍ່ໃຫ້ເກີນ 0.03 | mg/L | |
| ບາລຽມ<br>Barium | Ba | ບໍ່ໃຫ້ເກີນ 1.0 | mg/L | |
| ຊືນ<br>Lead | Pb | ບໍ່ໃຫ້ເກີນ 0.2 | mg/L | |
| ນິແກລ<br>Nickel | Ni | ບໍ່ໃຫ້ເກີນ 1.0 | mg/L | |
| ແມັງການີສ<br>Manganese | Mn | ບໍ່ໃຫ້ເກີນ 5.0 | mg/L | |
| ອາເຊນິກ<br>Arsenic | As | ບໍ່ໃຫ້ເກີນ 0.25 | mg/L | AA-Hydride Generation or ICP |
| ເຊເລນຽມ<br>Selenium | Se | ບໍ່ໃຫ້ເກີນ 0.02 | mg/L | |
| ບາຫຼອດ<br>Mercury | Hg | ບໍ່ໃຫ້ເກີນ 0.005 | mg/L | AA - Cold Vapour Techique |

**ຕາຕະລາງ 14.1: ປະເພດ ແລະ ຂະໜາດຂອງ ຕຶກອາຄານທີ່ຕ້ອງໄດ້ຄວບຄຸມມົນລະພິດທາງນໍ້າ**

| ປະເພດຕຶກອາຄານ | ຂະໜາດ | | | | |
|---|---|---|---|---|---|
| | A | B | C | D | E |
| ຄອນໂດມິນຽມ | 500 ຫ້ອງ ຫຼື ຫຼາຍກວ່າ | 100 ຫ້ອງ ແຕ່ບໍ່ເກີນ 500 ຫ້ອງ | ໜ້ອຍກວ່າ 100 ຫ້ອງ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ |
| ໂຮງແຮມ | 200 ຫ້ອງຫຼືຫຼາຍກວ່າ | 60 ຫ້ອງ ແຕ່ບໍ່ເກີນ 200 ຫ້ອງ | ໜ້ອຍກວ່າ 60 ຫ້ອງ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ |
| ຫໍພັກ | ບໍ່ໄດ້ກໍານົດ | 250 ຫ້ອງ ຂຶ້ນໄປ | 50 ຫ້ອງ ແຕ່ບໍ່ເກີນ 250 ຫ້ອງ | 10 ແຕ່ບໍ່ເກີນ 50 ຫ້ອງ | ບໍ່ໄດ້ກໍານົດ |
| ຮ້ານອົບນວດ (ຫຼື ຄ້າຍຄຽງ) | ບໍ່ໄດ້ກໍານົດ | 5,000 $m^2$ ຂຶ້ນໄປ | 1,000 ແຕ່ບໍ່ເກີນ 5,000 $m^2$ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ |
| ໂຮງໝໍ | 30 ຕຽງ ຫຼື ຫຼາຍກວ່າ | 10 ແຕ່ບໍ່ເກີນ 30 ຕຽງ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ |
| ໂຮງຮຽນ, ວິທະຍາໄລ, ສະຖາບັນ | 25,000 $m^2$ ຫຼື ຫຼາຍກວ່າ | 5,000 ແຕ່ບໍ່ເກີນ 25,000 $m^2$ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ |
| ສໍານັກງານ, ຫ້ອງການ | 55,000 $m^2$ ຫຼື ຫຼາຍກວ່າ | 10,000 ແຕ່ບໍ່ເກີນ 55,000 $m^2$ | ແຕ່ 5,000 ບໍ່ເກີນ 10,000 $m^2$ | ບໍ່ໄດ້ກໍານົດ | ບໍ່ໄດ້ກໍານົດ |

ຕໍ່ ຕາຕະລາງ 14.1

| ປະເພດຕຶກອາຄານ | ຂະໜາດ | | | | |
|---|---|---|---|---|---|
| | **A** | **B** | **C** | **D** | **E** |
| ສູນການຄ້າ | 25,000 $m^2$ ຫຼື ຫຼາຍກວ່າ | 5,000 ແຕ່ບໍ່ເກີນ 25,000 $m^2$ | ບໍ່ໄດ້ກຳນົດ | ບໍ່ໄດ້ກຳນົດ | ບໍ່ໄດ້ກຳນົດ |
| ຕະຫຼາດສົດ | 2,500 $m^2$ ຫຼື ຫຼາຍກວ່າ | 1,500 ແຕ່ບໍ່ເກີນ 2,500 $m^2$ | 1,000 ແຕ່ບໍ່ເກີນ 1,500 $m^2$ | 500 ແຕ່ບໍ່ເກີນ 1,000 $m^2$ | ບໍ່ໄດ້ກຳນົດ |
| ຮ້ານອາຫານ, ສູນອາຫານ | 2,500 $m^2$ ຫຼື ຫຼາຍກວ່າ | 500 ແຕ່ບໍ່ເກີນ 2,500 $m^2$ | 250 ແຕ່ບໍ່ເກີນ 500 $m^2$ | 100 ແຕ່ບໍ່ເກີນ 250 $m^2$ | ໜ້ອຍກວ່າ 100 $m^2$ |

**ຕາຕະລາງ 14.2: ມາດຕະຖານຄວບຄຸມມົນລະພິດທາງນ້ຳ ຈາກຕຶກອາຄານ**

| ໂຕວັດແທກ | ສັນຍາລັກ | ຄ່າອະນຸຍາດສູງສຸດແຕ່ລະປະເພດ | | | | | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|---|---|---|---|
| | | A | B | C | D | E | | |
| ຄ່າຄວາມເປັນ ກົດ - ດ່າງ potential of Hydrogen | pH | 5.5-8.5 | 5.5-8.5 | 5.5-8.5 | 5.5-8.5 | 5.5-8.5 | ບໍ່ໄດ້ກຳນົດ | pH Meter |
| ບີໂອດີ Biological Oxygen Demand 5 Days | $BOD_5$ | 20 | 30 | 40 | 50 | 60 | mg/L | Azide Modification at 20 °C, 5 days |
| ທາດແຂງແຂວນລອຍ Total Suspended Solid | TSS | 30 | 40 | 50 | 50 | 60 | mg/L | Glass Fiber Filter Disc |
| ຕະກອນຈົມ Sediment Solid | SS | 0.5 | 0.5 | 0.5 | 0.5 | ບໍ່ໄດ້ກຳນົດ | mg/L | Imhoff Cone 1,000 $cm^3$ 1hour |
| ທາດແຂງລະລາຍໃນນ້ຳ Total Dissolved Solid | TDS | 500 | 500 | 500 | 500 | ບໍ່ໄດ້ກຳນົດ | mg/L | Dry Evaporation 103-105 °C, 1hour |
| ຊັລໄຟດ໌ Sulfide | $S^{2-}$ | 1.0 | 1.0 | 3.0 | 4.0 | ບໍ່ໄດ້ກຳນົດ | mg/L | Titration |
| ໄນໂຕຣເຈນ Nitrogen | TKN | 35 | 35 | 40 | 40 | ບໍ່ໄດ້ກຳນົດ | mg/L | Kjeldahor colormetric |
| ໄຂມັນ ແລະ ນ້ຳມັນ Fat, Oil and Grease | FOG | 20 | 20 | 20 | 20 | 100 | mg/L | Solvent Extraction by Weight |

**ຕາຕະລາງ 14.3: ມາດຕະຖານຄວບຄຸມມົນລະພິດທາງນ້ຳ ຈາກບ້ານຈັດສັນ**

| ໂຕວັດແທກ | ສັນຍາລັກ | ຄ່າອະນຸຍາດສູງສຸດແຕ່ລະປະເພດ | | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|---|
| | | (A)<br>100 ຫຼັງແຕ່ບໍ່ເກີນ 500 | (B)<br>ຫຼາຍກວ່າ 500 | | |
| ຄ່າຄວາມເປັນກົດ - ດັ່ງ<br>potential of Hydrogen | pH | 5.5-8.5 | 5.5-8.5 | ບໍ່ໄດ້ກຳນົດ | pH Meter |
| ບີໂອດີ 5<br>Biological Oxygen Demand 5 Days | $BOD_5$ | 30 | 20 | mg/L | Azide Modification at 20 $^oC$ , 5 days |
| ທາດແຂງແຂວນລອຍ<br>Total Suspended Solid | TSS | 40 | 30 | mg/L | Glass Fiber Filter Disc |
| ຕະກອນຈົມ<br>Sediment Solid | SS | 0.5 | 0.5 | mg/L | Imhoff Cone 1,000 cm3 1hour |
| ທາດແຂງລະລາຍນ້ຳ<br>Total Dissolved Solid | TDS | 500 | 500 | mg/L | Dry Evaporation 103-105 °C, 1 hour |
| ຊັລໄຟດ໌<br>Sulfide | $S^{2-}$ | 1.0 | 1.0 | mg/L | Titration |
| ໄນໂຕຣເຈນ<br>Nitrogen | TKN | 35 | 35 | mg/L | Kjeldahl |
| ໄຂມັນ ແລະ ນ້ຳມັນ<br>Fat, Oil and Grease | FOG | 20 | 20 | mg/L | Sovent Extraction by Weight |

**ຕາຕະລາງ 14.4: ມາດຕະຖານຄວບຄຸມມົນລະພິດທາງນ້ຳ ຈາກຫ້ອງນ້ຳ**

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ຄ່າຄວາມເປັນ ກົດ - ດັ່ງ<br>potential of Hydrogen | pH | 6-9 | ບໍ່ໄດ້ກຳນົດ | pH Meter |
| ບີໂອດີ 5<br>Biological Oxygen Demand 5 Days | $BOD_5$ | 30 | mg/L | Azide Modification at 20 $^oC$ , 5 days |
| ຊີໂອດີ<br>Chemical Oxygen Demand | COD | 125 | mg/L | Potassium Dichromate Digestion ; Open Reflux or Closed Reflux |
| ທາດແຂງແຂວນລອຍ<br>Total Suspended Solid | TSS | 50 | mg/L | Glass Fiber Filter Disc |
| ໄນໂຕຣເຈນລວມ<br>Total Nitrogen | TKN | 10 | mg/L | Kjeldahl |
| ເຟໂນລ<br>Phenol | $C_6H_5OH$ | 2 | mg/L | Distillation and Aminoantipyrine Method 4 |
| ໄຂມັນ ແລະ ນ້ຳມັນ<br>Fat, Oil and Grease | FOG | 5.0 | mg/L | Solvent Extraction by Weight |
| ທາດແຂງລະລາຍນ້ຳ<br>Total Dissolved Solid | TDS | 400 | MPN/ml | Dry Evaporation 103-105 °C, 1 hour |

**ຕາຕະລາງ 14.5: ມາດຕະຖານຄວບຄຸມມົນລະພິດທາງນ້ຳ ລົງສູ່ຮ່ອງນ້ຳສາທາລະນະ**

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ຄ່າຄວາມເປັນ ກົດ - ດ່າງ<br>potential of Hydrogen | pH | 5.5-8.5 | ບໍ່ໄດ້ກຳນົດ | pH Meter |
| ຄ່າການຊັກນຳໄຟຟ້າ<br>Electro-Conductivity | Ec | 2,000 | µS/cm | |
| ທາດແຂງລະລາຍນ້ຳ<br>Total Dissolved Solid | TDS | 1,300 | mg/L | Dry Evaporation<br>103-105 °C, 1 hour |
| ບີໂອດີ 5<br>Biological Oxygen Demand 5 Days | $BOD_5$ | 30 | mg/L | Azide Modification at 20 $^oC$ , 5 days |
| ທາດແຂງແຂວນລອຍ<br>Total Suspended Solid | TSS | 30 | mg/L | Glass Fiber Filter Disc |
| ເພີແມັງການເນດ<br>Per-manganese | $MnO_4^-$ | 6.0 | mg/L | Titration |
| ໄຮໂດຣເຈນຊັລໄຟດ໌<br>Hydrogen Sulfide | $H_2S$ | 1.0 | mg/L | Titration |
| ໄຊຢາໄນດ໌<br>Cyanide | $CN^-$ | 0.2 | mg/L | Distilation and Pyridine Barbituric Acid |
| ໄຂມັນ ແລະ ນ້ຳມັນ<br>Fat, Oil and Grease | FOG | 5.0 | mg/L | Solvent Extraction by Weight |
| ຟໍມັນດີໄຮດ໌<br>Formaldehyde | $CH_2O$ | 1.0 | mg/L | Spectrophotometry |
| ເຟໂນລ ແລະ ຄຼີໂຊນ<br>Phenol and Cresol | $C_6H_5OH$ | 1.0 | mg/L | Distillation and Aminoantipyrine Method 4 |
| ຄຼໍລີນຕົກຄ້າງ<br>Resident Chlorine | $Cl^-$ | 1.0 | mg/L | Lodometric Method |
| ກຳມັນຕະພາບລັງສີ<br>Radioactive | ບໍ່ໄດ້ກຳນົດ | ຕ້ອງບໍ່ມີ | mg/L | General |
| ສີ ແລະ ກິ່ນ<br>Color and Odor | ບໍ່ໄດ້ກຳນົດ | ບໍ່ສັງເກດເຫັນໄດ້ | mg/L | General |
| ນ້ຳມັນດິນ<br>Tar | ບໍ່ໄດ້ກຳນົດ | ຕ້ອງບໍ່ມີ | mg/L | General |
| **ໂລຫະໜັກ** | | | | |
| ສັງກະສີ<br>Zinc | Zn | 5.0 | mg/L | Atomic Absorption (AA) |
| ໂຄຼມຽມ<br>Chromium Hexavalent | $Cr^{+6}$ | 0.3 | | |
| ອາເຊນິກ<br>Arsenic | As | 0.25 | | |

ຕໍ່ ຕາຕະລາງ 14.5

| ໂຕວັດແທກ | ສັນຍາລັກ | ຄ່າມາດຕະຖານ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ທອງ<br>Copper | Cu | 1.0 | mg/L | Atomic Absorption (AA) |
| ບາຫຼອດ<br>Mercury | Hg | 0.005 | | |
| ແຄັດມຽມ<br>Cadmium | Cd | 0.03 | | |
| ບາລຽມ<br>Barium | Ba | 1.0 | | |
| ເຊເລນຽມ<br>Selenium | Se | 0.02 | | |
| ຊືນ<br>Lead | Pb | 0.1 | | |
| ນິແກລ<br>Nickel | Ni | 0.2 | | |
| ແມັງການີສ<br>Manganese | Mn | 0.5 | | |

**ຕາຕະລາງ 14.6: ມາດຕະຖານຄວບຄຸມມົນລະພິດທາງນ້ຳ ຈາກຟາມລ້ຽງໝູ**

| ໂຕວັດແທກ | ສັນຍາລັກ | ຄ່າອະນຸຍາດສູງສຸດ | | | |
|---|---|---|---|---|---|
| | | ມາດຕະຖານ A | ມາດຕະຖານ B | ຫົວໜ່ວຍ | ວິທີວິເຄາະ |
| ຄ່າຄວາມເປັນ ກົດ - ດ່າງ<br>potential of Hydrogen | pH | 5.5-8.5 | 5.5-8.5 | ບໍ່ໄດ້ກຳນົດ | pH meter |
| ບີໂອດີ 5<br>Biological Oxygen Demand 5 Days | $BOD_5$ | ບໍ່ໃຫ້ເກີນ 60 | ບໍ່ໃຫ້ເກີນ100 | mg/L | AzideModificationor Membrane Electrode |
| ຊີໂອດີ<br>Chemical Oxygen Demand | COD | ບໍ່ໃຫ້ເກີນ300 | ບໍ່ໃຫ້ເກີນ400 | mg/L | Potassium Dichromate Digestion; Open Reflux or Closed Reflux |
| ທາດແຂງແຂວນລອຍ<br>Total Suspended Solid | TSS | ບໍ່ໃຫ້ເກີນ150 | ບໍ່ໃຫ້ເກີນ200 | mg/L | Glass Fiber Filter Disc, Dry Evaporation 103-105 °C |
| ໄນໂຕຣເຈນລວມ<br>Total Nitrogen | TKN | ບໍ່ໃຫ້ເກີນ120 | ບໍ່ໃຫ້ເກີນ200 | mg/L | Kjeldahl, Colorimetric or Ammonia Selective Electrode |

**ໝາຍເຫດ :**

**ມາດຕະຖານ A**

- ຟາມຂະໜາດໃຫຍ່ ມີສັດລ້ຽງຫຼາຍກວ່າ 400 ຫົວໜ່ວຍສັດລ້ຽງ
- ຟາມຂະໜາດກາງ ມີສັດລ້ຽງຫຼາຍກວ່າ 60 - 400 ຫົວໜ່ວຍສັດລ້ຽງ

**ມາດຕະຖານ B**

ຟາມຂະໜາດນ້ອຍ ມີສັດລ້ຽງຕັ້ງແຕ່ 6 ແຕ່ບໍ່ເກີນ 60 ຫົວໜ່ວຍສັດລ້ຽງ

- 1 ຫົວໜ່ວຍສັດລ້ຽງ = 500 kg
- ໝູ່ ພໍ່ແມ່ພັນ ນ້ຳໜັກສະເລ່ຍ = 170 kg/ໂຕ
- ໝູ່ ຊີ້ນນ້ຳໜັກສະເລ່ຍ = 60 kg/ໂຕ
- ໝູ່ນ້ອຍ ນ້ຳໜັກສະເລ່ຍ = 12 kg/ໂຕ

**ຕາຕະລາງ 14.7: ມາດຕະຖານຄວບຄຸມການປ່ອຍມົນລະພິດທາງນ້ຳ ຈາກບ່ອນລ້າງລົດ ແລະ ປ້ຳນ້ຳມັນ**

| ໂຕວັດແທກ | ສັນຍາລັກ | ໄລຍະເວລາ ແລະ ຄ່າອະນຸຍາດສູງສຸດ | ຫົວໜ່ວຍ | ວິທີວິເຄາະ |
|---|---|---|---|---|
| ຄ່າຄວາມເປັນ ກົດ - ດ່າງ potential of Hydrogen | pH | 5.5-8.5 | ບໍ່ໄດ້ກຳນົດ | pH meter |
| ຊີໂອດີ Chemical Oxygen Demand | COD | ບໍ່ໃຫ້ເກີນ 200 | mg/L | Potassium Dichromate Digestion |
| ທາດແຂງແຂວນລອຍ Total Suspended Solid | TSS | ບໍ່ໃຫ້ເກີນ 60 | mg/L | Glass Fiber Filter Disc |
| ໄຂມັນ ແລະ ນ້ຳມັນ Fat, Oil and Grease | FOG | ບໍ່ໃຫ້ເກີນ 15 | mg/L | Extract with solvent after solvent evaporation is weighed to determine the oil and grease content. |

**ໝາຍເຫດ:** ສຳລັບເຂດ ອຸດສາຫະກຳ ຫຼື ມີຫຼາຍໂຮງງານຕັ້ງຢູ່ສະຖານທີ່ດຽວກັນ ແມ່ນກຳນົດມາດຕະຖານສະເພາະ.

# ໝວດທີ 5
# ມາດຕະຖານສຽງ ແລະ ການສັ່ນສະເທືອນ

## ມາດຕາ 15 ມາດຕະຖານສຽງທົ່ວໄປ

ມາດຕະຖານສຽງທົ່ວໄປ ແມ່ນຄ່າຊີ້ບອກທີ່ກຳນົດລະດັບສຽງ ທີ່ອະນຸຍາດໃຫ້ເກີດຂຶ້ນໄດ້ຈາກແຫຼ່ງກຳ ເນີດສຽງໂດຍບໍ່ໃຫ້ເປັນສິ່ງລົບກວນສິ່ງ ແລະ ຜົນກະທົບຕໍ່ຊີວິດ, ສຸຂະພາບຂອງ ຄົນ, ສັດ ແລະ ສິ່ງແວດລ້ອມ ຕ້ອງຄວບຄຸມໃຫ້ຢູ່ໃນລະດັບຄ່າມາດຕະຖານຄວບຄຸມສຽງທົ່ວໄປ ທີ່ກຳນົດໄວ້ດັ່ງລຸ່ມນີ້:

**ຕາຕະລາງ 15: ມາດຕະຖານສຽງທົ່ວໄປ**

| ຄ່າມາດຕະຖານ | ວິທີການວັດແທກ ລະດັບສຽງ |
|---|---|
| ລະດັບສຽງສູງສຸດ ($L_{max}$) ບໍ່ໃຫ້ເກີນ 115 ເດຊິເບລ (ເອ) dB(A) | ວັດແທກລະດັບສຽງ ($L_{eq}$) ຂະນະທີ່ມີການປ່ຽນແປງລະດັບຂຶ້ນລົງຂອງສຽງ |
| ລະດັບສຽງສະເລ່ຍ 24 ຊົ່ວໂມງ ($L_{eq}$24) ບໍ່ໃຫ້ເກີນ70 dB(A) | ວັດແທກລະດັບສຽງ ($L_{eq}$) ແບບຕໍ່ເນື່ອງ |

**ຕາຕະລາງ 15.1: ມາດຕະຖານຄວບຄຸມສຽງລົບກວນ**

| ຄ່າມາດຕະຖານລະດັບສຽງ | ວິທີການວັດແທກລະດັບສຽງ |
|---|---|
| ຄ່າລະດັບຄວາມຕ່າງຂອງສຽງໃນເວລາທີ່ມີການລົບກວນ ກັບລະດັບສຽງພື້ນຖານ ($L_{90}$) ບໍ່ໃຫ້ເກີນ 10 dB(A) | ໃນເວລາມີສຽງລົບກວນເກີດຂຶ້ນຕໍ່ເນື່ອງບໍ່ເກີນ 1 ຊົ່ວໂມງໃຫ້ວັດແທກເປັນຄ່າລະ ດັບສຽງ 1 ຊົ່ວໂມງ ($L_{eq\ 1\ hr}$) |
| | ໃນເວລາມີສຽງລົບກວນເກີດຂຶ້ນຕໍ່ເນື່ອງ 1 ຊົ່ວໂມງ ຂຶ້ນໄປ ໃຫ້ວັດແທກເປັນຄ່າລະດັບສຽງ ຕາມຕົວຈິງ |
| | ໃນເວລາມີສຽງລົບກວນເກີດຂຶ້ນ ບໍ່ຕໍ່ເນື່ອງ 1 ຊົ່ວໂມງ ໃຫ້ວັດແທກ ເປັນຄ່າລະດັບສຽງ 1 ຊົ່ວໂມງ ($L_{eq\ 1\ hr}$) |
| | ສະເພາະສະຖານທີ່ຕ້ອງການຄວາມງຽບສະຫງົບ ເປັນຕົ້ນ ໂຮງໝໍ, ໂຮງຮຽນ, ສະ ຖານທີ່ລັດຖະການ ແລະ ອື່ນ ຫຼື ໃນຊ່ວງເວລາ 22:00 ໂມງ ຫາ 6:00 ໃຫ້ວັດແທກ ເປັນລະດັບສຽງສະເລ່ຍ 5 ນາທີ ($L_{eq}$ 5 min) ແລະ ບວກເພີ່ມ 3dB(A) |

**ຕາຕະລາງ 15.2: ມາດຕະຖານຄວບຄຸມສຽງຈາກການນຳໃຊ້ເຄື່ອງຈັກ ແລະ ພາຫະນະ**

| ຄ່າມາດຕະຖານ | ວິທີການວັດແທກ |
|---|---|
| 1. ເຄື່ອງຈັກນຳໃຊ້ ໃນການເດີນເຮືອ | |
| ວັດແທກຫ່າງຈາກປາຍທໍ່ 0.5 ແມັດບໍ່ໃຫ້ເກີນ 100 dB(A) | ຈັກກາຊວນ: ເລັ່ງຈົນເຖິງຮອບສູງສຸດຂອງເຄື່ອງຈັກຕໍ່ນາທີ |
| ທົດສອບ 2 ຄັ້ງ ໂດຍວັດແທກຄ່າສູງສຸດ. ຖ້າຕ່າງກັນເກີນ 2 dB (A) ແມ່ນໃຫ້ວັດໃໝ່ອີກຄັ້ງ | ຈັກແອັດຊັງ: ເລັ່ງ 3/4 ຂອງຮອບສູງສຸດ |

| ຄ່າມາດຕະຖານ | ວິທີການວັດແທກ |
|---|---|
| **3. ເຄື່ອງຈັກນຳໃຊ້ ໃນພາຫະນະທົ່ວໄປ** | |
| ວັດແທກ ທີ່ 7.5 ແມັດ ບໍ່ໃຫ້ເກີນ 85dB (A) ຫຼື | ຈັກກາຊວນ: ວັດແທກໃນຂະນະລົດເລັ່ງຈົນເຖິງຮອບສູງສຸດຂອງເຄື່ອງຈັກ |
| ວັດແທກ 0.5 ແມັດບໍ່ໃຫ້ເກີນ 100 dB (A) | ຈັກແອັດຊັງ: ວັດແທກໃນຂະນະລົດຈອດ ເລັ່ງ 3/4 ຂອງຮອບສູງສຸດ |
| **4. ເຄື່ອງຈັກນຳໃຊ້ ລົດຈັກ** | |
| ວັດແທກໄລຍະ0.5ແມັດບໍ່ໃຫ້ເກີນ 95 dB (A) ລົດຈັກທີ່ແລ່ນຕາມຖະໜົນຈົນກະທັ່ງລົດຢຸດບໍ່ມີສຽງ | ເລັ່ງຄວາມໄວຂອງເຄື່ອງຈັກ 3/4 ຂອງຮອບສູງສຸດ, ຖ້າຮອບສູງສຸດເຄື່ອງຈັກບໍ່ເກີນ 5,000 ຮອບ ຕໍ່ ນາທີ |
| | ເລັ່ງຄວາມໄວຂອງເຄື່ອງຈັກ 1/3 ຂອງຮອບສູງສຸດ, ຖ້າຮອບສູງສຸດເຄື່ອງຈັກເກີນ 5,000 ຮອບ ຕໍ່ ນາທີ |

**ຕາຕະລາງ 15.3: ມາດຕະຖານຄວບຄຸມສຽງ ຈາກກິດຈະການບໍ່ແຮ່ ແລະ ການລະເບີດຫີນ**

| ຄ່າມາດຕະຖານ | ການວັດແທກ ລະດັບສຽງ |
|---|---|
| ລະດັບສຽງສູງສຸດບໍ່ຄວນເກີນ 115 dB(A) | ການວັດແທດລະດັບສຽງສູງສຸດ ແມ່ນໃຊ້ວິທີການ Sound Pressure Level (SPL)ໃນເວລາທີ່ລະເບີດຫີນ |
| ລະດັບສຽງຕໍ່ເນື່ອງ ($L_{eq}$) 8 ຊົ່ວໂມງບໍ່ໃຫ້ເກີນ 75 dB (A) | ການວັດແທກສຽງສະເລ່ຍ ໃນເວລາ 8 ຊົ່ວໂມງ ໃຫ້ໃຊ້ມາດຕະຖານວັດແທກລະດັບສຽງຕໍ່ເນື່ອງຕະຫຼອດເວລາ 8 ຊົ່ວໂມງ ທີ່ມີການຂຸດ ແລະ ບົດຫີນ |
| ລະດັບສຽງຕໍ່ເນື່ອງ ($L_{eq}$) 24 ຊົ່ວໂມງ ບໍ່ໃຫ້ເກີນ 70 dB (A) | ການວັດແທກລະດັບສຽງ ສະເລ່ຍເວລາ 24 ຊົ່ວໂມງ ໃຫ້ໃຊ້ມາດຕະຖານວັດແທກລະດັບສຽງຢ່າງຕໍ່ເນື່ອງ ຕະຫຼອດ 24 ຊົ່ວໂມງ. |

## ມາດຕາ 16 ມາດຕະຖານຄວບຄຸມຄວາມສັ່ນສະເທືອນ

ມາດຕະຖານຄວບຄຸມຄວາມສັ່ນສະເທືອນ ແມ່ນຄ່າຊີ້ບອກທີ່ກຳນົດລະດັບຄວາມສັ່ນສະເທືອນທີ່ອະນຸ ຍາດໃຫ້ເກີດຂຶ້ນ ເຊິ່ງບໍ່ສົ່ງຜົນກະທົບຕໍ່ສ່ວນປະກອບ ຫຼື ໂຄງສ້າງຂອງສິ່ງກໍ່ສ້າງຕ້ອງຢູ່ໃນຄ່າມາດຕະຖານຄວບຄຸມການສັ່ນສະເທືອນ ທີ່ກຳນົດໄວ້ ດັ່ງລຸ່ມນີ້:

**ຕາຕະລາງ 16: ມາດຕະຖານຄວບຄຸມຄວາມສັ່ນສະເທືອນ ຈາກກິດຈະການ ບໍ່ແຮ່ ແລະ ການລະເບີດຫີນ**

| **ຄື້ນຄວາມຖີ່ Frequency (Hertz)** | **ຄວາມໄວຂອງຄື້ນ Velocity (mm/s)** ບໍ່ໃຫ້ເກີນ | **ການເຄື່ອນທີ່ຂອງຄື້ນ Displacement (mm)** ບໍ່ໃຫ້ເກີນ |
|---|---|---|
| 1 | 4.7 | 0.75 |
| 2 | 9.4 | 0.75 |
| 3 | 12.7 | 0.67 |
| 4 | 12.7 | 0.51 |
| 5 | 12.7 | 0.40 |
| 6 | 12.7 | 0.34 |
| 7 | 12.7 | 0.29 |
| | | |

| | | ຕໍ່ ຕາຕະລາງ 16 |
|---|---|---|
| **ຄື້ນຄວາມຖີ່ Frequency (Hertz)** | **ຄວາມໄວຂອງຄື້ນ Velocity (mm/s)** ບໍ່ໃຫ້ເກີນ | **ການເຄື່ອນທີ່ຂອງຄື້ນ Displacement (mm)** ບໍ່ໃຫ້ເກີນ |
| 8 | 12.7 | 0.25 |
| 9 | 12.7 | 0.23 |
| 10 | 12.7 | 0.23 |
| 11 | 13.8 | 0.20 |
| 12 | 15.1 | 0.20 |
| 13 | 16.3 | 0.20 |
| 14 | 17.6 | 0.20 |
| 15 | 18.8 | 0.20 |
| 16 | 20.1 | 0.20 |
| 17 | 21.4 | 0.20 |
| 18 | 22.6 | 0.20 |
| 19 | 23.9 | 0.20 |
| 20 | 25.1 | 0.20 |
| 21 | 26.4 | 0.20 |
| 22 | 27.6 | 0.20 |
| 23 | 28.9 | 0.20 |
| 24 | 30.2 | 0.20 |
| 25 | 31.4 | 0.20 |
| 26 | 32.7 | 0.20 |
| 27 | 33.9 | 0.20 |
| 28 | 35.2 | 0.20 |
| 29 | 36.4 | 0.20 |
| 30 | 37.7 | 0.20 |
| 31 | 39.0 | 0.20 |
| 32 | 40.2 | 0.20 |
| 33 | 41.5 | 0.20 |
| 34 | 42.7 | 0.20 |
| 35 | 44.0 | 0.20 |
| 36 | 45.2 | 0.20 |
| 37 | 46.5 | 0.20 |
| 38 | 47.8 | 0.20 |
| 39 | 49.0 | 0.20 |
| 40 | 50.8 | 0.20 |

**ຕາຕະລາງ 16.1: ວິທີການວັດແທກຄວາມສັ່ນສະເທືອນ**

| ການຕິດຕັ້ງ ອຸປະກອນວັດແທກ | ວິທີການວັດແທກ |
|---|---|
| ຕິດຕັ້ງຫົວວັດແທກ ຄວາມສັ່ນສະເທືອນ ເທິງໜ້າດິນ | ໃຫ້ໃຊ້ວັດຖຸ-ອຸປະກອນໃດໜຶ່ງ ເປັນຫຼັກຍຶດຫົວວັດແທກຄວາມສັ່ນສະເທືອນໃຫ້ໝັ້ນຄົງ ເພື່ອບໍ່ໃຫ້ຫົວວັດແທກເຄື່ອນຍ້າຍຈາກຕຳແໜ່ງທີ່ຕິດຕັ້ງໃນເວລາເຮັດການວັດແທກ |
| ການຕິດຕັ້ງຫົວວັດແທກຄວາມສັ່ນສະເທືອນ ຢູ່ເທິງພື້ນ ຄອນກຣີດ ດ້ານນອກສິ່ງກໍ່ສ້າງ | ໃຫ້ວັດແທກບໍລິເວນຄອນກຣີດ ທີ່ຢູ່ລະດັບດຽວກັບພື້ນດິນ ຫຼື ຖານຄອນກຣີດ ທີ່ມີຄວາມສູງຈາກພື້ນດິນບໍ່ໃຫ້ເກີນ 0.5 ແມັດ ໂດຍຍຶດຫົວວັດແທກຄວາມສັ່ນສະເທືອນໃຫ້ໝັ້ນຄົງ ບໍ່ໃຫ້ເຄື່ອນເໜັງໄດ້ |

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍມອບໃຫ້ກົມຄວບຄຸມມົນລະພິດເປັນເຈົ້າການຮັບຜິດຊອບໂດຍກົງ ທັງເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຜັນຂະຫຍາຍ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້, ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ. ຂະແໜງການທີ່ກ່ຽວຂ້ອງ ສາມາດສ້າງມາດຕະຖານເພື່ອຄວບຄຸມມົນລະພິດສະ ເພາະແຕ່ລະກິດຈະກຳ, ແຕ່ຄ່າມາດຕະຖານຕ້ອງຢູ່ພາຍໃຕ້ ມາດຕະຖານສິ່ງແວດລ້ອມ ແຫ່ງຊາດ ສະບັບນີ້.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍ ມາດຕະຖານສິ່ງແວດລ້ອມ ແຫ່ງຊາດ ສະບັບເລກທີ 2734/ສນຍ-ອຂນສ, ລົງວັນທີ 7 ທັນວາ 2009.

**ລັດຖະມົນຕີ**

**ສົມມາດ ພົລເສນາ**

# ເອກະສານຄັດຕິດ

## ການອະທິບາຍຂອງທາດເຄມີ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້:

1. **ຄາຣ໌ບອນໂມນ໊ອກໄຊດ໌ Carbonmonoxide (CO)** ແມ່ນທາດອາຍທີ່ບໍ່ມີ ສີ, ບໍ່ມີລົດຊາດ, ບໍ່ມີກິ່ນ ແລະ ເບົາກ່ວາອາກາດທົ່ວໄປ ເຊິ່ງເກີດຈາກການເຜົາໄໝ້ທີ່ບໍ່ສົມບູນຂອງເຊື້ອໄຟທີ່ມີ ຄາຣ໌ບອນ ເປັນອົງປະກອບ.
   - ຜົນກະທົບຕໍ່ສຸຂະພາບ: **(CO)** ຈະເຂົ້າໄປຂັດຂວາງການສົ່ງອອກຊີເຈນຂອງເມັດເລືອດແດງ ເຮັດໃຫ້ເກີດອາການອ່ອນເພຍ, ວິນຫົວ; ຖ້າໄດ້ຮັບຫຼາຍກໍ່ຈະເຖິງຂັ້ນເສຍຊີວິດໄດ້.
2. **ໄນໂຕຼເຈນໄດອ໊ອກໄຊດ໌ Nitrogen Dioxide ($NO_2$)** ແມ່ນ ທາດອາຍສີນ້ຳຕານ ເຊິ່ງເກີດຂຶ້ນຕາມທຳມະຊາດແລະ ເກີດຈາກການກະທຳຂອງມະນຸດ ເຊັ່ນ: ການນຳໃຊ້ເຊື້ອໄຟໃນການເຜົາໄໝ້ຂອງໂຮງງານອຸດສາຫະກຳ ລວມເຖິງ ການເຜົາໄໝ້ຂອງ ເຄື່ອງຈັກ ແລະ ພາຫະນະໃນອຸນຫະພູມສູງ.
   - ຜົນກະທົບ: ເມື່ອສູດດົມເຂົ້າໄປຈະເປັນອັນຕະລາຍຕໍ່ປອດ ເຮັດໃຫ້ປອດອັກເສບ ແລະ ຫຼອດລົມຕີບ.
     ເມື່ອລວມຕົວກັບນ້ຳຈະກາຍເປັນກົດ ເຮັດໃຫ້ເກີດການລະຄາຍເຄືອງ ຕໍ່ລະບົບທາງເດີນຫາຍໃຈ, ດັງ ແລະ ຕາ. ຖ້າໄດ້ຮັບໃນປະລິມານຫຼາຍອາດເຖິງແກ່ຊີວິດໄດ້.
3. **ໂອໂຊນ Ozone ($O_3$)** ແມ່ນທາດອາຍ ທີ່ເກີດຂຶ້ນຈາກ ຂະບວນການ Photochemical smogໃນພາວະທີ່ເກີດໝອກຄວັນຂອງທາດພິດ ລະຫ່ວາງ ອ໊ອກໄຊດ໌ຂອງໄນໂຕຣເຈນ, ໄຮໂດຄາຣ໌ບອນ ແລະ ມີແສງແດດເປັນຕົວເລັ່ງປະຕິກິລິຍາ ເຮັດໃຫ້ເກີດເປັນ ໂອໂຊນ.
   - ຜົນກະທົບຖ້າມີໂອໂຊນຫຼາຍເກີນໄປ ຈະເຮັດໃຫ້ເກີດອາການແສບຕາ, ລະຄາຍເຄືອງຕໍ່ລະບົບທາງເດີນຫາຍໃຈ ແລະ ຮຸນແຮງຈະກໍ່ໃຫ້ເກີດເປັນມະເຮັງຜິວໜັງໄດ້.
4. **ຊັລເຟີໄດອ໊ອກໄຊດ໌ Sulfer Dioxide ($SO_2$)** ແມ່ນທາດອາຍບໍ່ມີສີ, ບໍ່ໄວໄຟ, ມີກິ່ນຂິວ ເກີດຈາກການເຜົາໄໝ້ເຊື້ອໄຟທີ່ມີສ່ວນປະກອບຂອງຊັນເຟີປະສົມຢູ່.
   - ຜົນກະທົບຕໍ່ສຸຂະພາບ: ຖ້າໄດ້ຮັບສານດັ່ງກ່າວເຂົ້າຮ່າງກາຍຈະເຮັດໃຫ້ຊີບພະຈອນເຕັ້ນຖີ່, ຄັນຄໍ, ແສບຕາ ແລະ ແໜ້ນໜ້າເອິກ.
   - ເມື່ອກະຈາຍໃນບັນຍາກາດຈະປ່ຽນຮູບເປັນ **$SO_3$** ລວມຕົວກັບນ້ຳ ຈະກາຍເປັນກົດ **$H_2SO_4$** ຈະກາຍເປັນຝົນກົດ.
5. **ຊືນ Lead (Pb)** ແມ່ນທາດໂລຫະ ທີ່ມີເນື້ອອ່ອນ, ສາມາດທົດຍືດໄດ້, ມີສີຂາວປົນຟ້າ ແຕ່ເມື່ອຖືກອາກາດສີຈະປ່ຽນເປັນສີເທົາ, ຈັດເປັນໂລຫະໜັກທີ່ມີພິດ ເຊິ່ງວັດຖຸດິບທີ່ສຳຄັນໃນອຸດສາຫະກຳການຜະລິດ ແບັດເຕີລີ, ເຄື່ອງໄຟຟ້າ, ເຄືອບສັງກະສີ ແລະ ເຄືອບພາຊະນະຕ່າງໆ.
   - ຜົນກະທົບ: ມີຜົນຕໍ່ລະບົບປະສາດ ແລະ ສະໝອງ, ເຈັບຫົວ, ອ່ອນເພຍ, ເບື່ອອາຫານ, ປວດກ້າມເນື້ອ, ຊາຕາມປາຍມືປາຍຕີນ, ສູນເສຍຄວາມຮູ້ສຶກ, ມີຜົນຕໍ່ການພັດທະນາສະໝອງ ແລະ ສະຕິປັນຍາຂອງເດັກນ້ອຍ, ລະບົບຫົວໃຈ, ເລືອດຈາງ, ຄວາມດັນເລືອດສູງ, ລະບົບສືບພັນ ແລະ ເດັກນ້ອຍໃນທ້ອງ.
6. **ຝຸ່ນລະອອງລວມ 100 ໄມຄຣອນ Total Suspended Particulate (TSP)** ແມ່ນຝຸ່ນອະນຸພາກ ຂະໜາດນ້ອຍ ບໍ່ເກີນ 100 ໄມຄຣອນ ເຊິ່ງເກີດຈາກທຳມະຊາດ ແລະ ກິດຈະກຳຂອງມະນຸດ ເປັນຕົ້ນ: ໄຟ

ໄໝ້ປ່າ, ຝຸ່ນ, ຄັວນຈາກ ການຄົມມະນາຄົມຂົນສົ່ງ, ການກໍ່ສ້າງ, ການຜະລິດອຸດສາຫະກຳປຸງແຕ່ງ ແລະ ອຸດສາຫະກຳບໍ່ແຮ່ ແລະ ອື່ນໆ

- ຜົນກະທົບ: ມີຜົນກະທົບຕໍ່ສຸຂະອານາໄມຂອງສິ່ງທີ່ມີຊີວິດ, ໄອ, ຫຼອດລົມອັກເສບ, ມີຜົນຕໍ່ຜູ້ທີ່ມີບັນຫາທາງລະບົບຫາຍໃຈເຊັ່ນ: ໂລກຫອບຫືດ, ເກີດຄວາມເສຍຫາຍຕໍ່ອາຄານບ້ານເຮືອນ, ເກີດຄວາມເດືອດຮ້ອນແກ່ປະຊາຊົນ ແລະ ບົດບັງວິໄສທັດເຮັດໃຫ້ເກີດອຸປະສັກໃນການເບິ່ງເຫັນ.

7. **ຝຸ່ນລະອອງ 10 ໄມຄຣອນ Particulate Matter 10 ($PM_{10}$)** ແມ່ນຝຸ່ນລະອອງທີ່ມີຂະໜາດນ້ອຍກວ່າ ຫຼື ເທົ່າກັບ 10 ໄມຄຣອນ ທີ່ສາມາດເຂົ້າສູ່ຮ່າງກາຍມະນຸດໄດ້.
   - ຜົນກະທົບ: ມີຜົນກະທົບຕໍ່ສຸຂະອານາໄມຂອງສິ່ງທີ່ມີຊີວິດ, ໄອ, ຫຼອດລົມອັກເສບ, ເກີດຄວາມເສຍຫາຍຕໍ່ລະບົບຫາຍໃຈສ່ວນເທິງ, ອາຄານບ້ານເຮືອນ, ເກີດຄວາມເດືອດຮ້ອນແກ່ປະຊາຊົນ ແລະ ບົດບັງວິໄສທັດເຮັດໃຫ້ເກີດອຸປະສັກໃນການເບິ່ງເຫັນ.
8. **ຝຸ່ນລະອອງ 2.5 ໄມຄຣອນ Particulate Matter 2.5 ($PM_{2.5}$)** ແມ່ນຝຸ່ນລະອອງທີ່ມີຂະໜາດນ້ອຍກວ່າ ຫຼື ເທົ່າກັບ **2.5** ໄມຄຣອນ ທີ່ສາມາດເຂົ້າສູ່ຮ່າງກາຍມະນຸດໄດ້ ແລະ ສົ່ງຜົນກະທົບຕໍ່ ລະບົບການຫາຍໃຈ ແລະ ສາມາດຊຶມເຂົ້າໄປໃນເສັ້ນເລືອດໄດ້.
   - ຜົນກະທົບ: ມີຜົນກະທົບຕໍ່ສຸຂະອານາໄມຂອງສິ່ງທີ່ມີຊີວິດ, ໄອ, ເກີດຄວາມເສຍຫາຍຕໍ່ລະບົບຫາຍໃຈສ່ວນລຸ່ມຄື: ຖົງລົມປອດ, ອາຄານບ້ານເຮືອນ, ເກີດຄວາມເດືອດຮ້ອນແກ່ປະຊາຊົນ ແລະ ບົດບັງວິໄສທັດເຮັດໃຫ້ເກີດອຸປະສັກໃນການເບິ່ງເຫັນ.
9. **pH (potential of Hydrogenions)** ແມ່ນ ຄ່າບອກຄວາມເປັນ ກົດ-ດ່າງ ຂອງທາດລະລາຍ ທີ່ມີລະດັບແຕ່ 1-14 ໂດຍທົ່ວໄປຄ່າລະດັບຄວາມເປັນກາງຈະມີຄ່າທີ່ 7.
   - ຜົນກະທົບ: ມີຜົນກະທົບຕໍ່ສິ່ງທີ່ມີຊີວິດໃນນ້ຳເມື່ອເວລາ pH ມີຄ່າຕ່ຳກວ່າ 4 ເຮັດໃຫ້ນ້ຳກາຍເປັນກົດ ເຮັດໃຫ້ສິ່ງມີຊີວິດບໍ່ສາມາດດຳລົງຊີວິດຢູ່ໄດ້ ແລະ ມີຜົນກະທົບຕໍ່ສິ່ງທີ່ມີຊີວິດໃນນ້ຳເມື່ອ pH ມີຄ່າຫຼາຍກວ່າ 10 ຂຶ້ນໄປ.
10. **ອົກຊີເຈນທີ່ລະລາຍໃນນ້ຳ Dissloved Oxygen (DO)** ແມ່ນ ປະລິມານອົກຊີເຈນທີ່ລະລາຍຢູ່ໃນນ້ຳ ເປັນຕົວຊີ້ບອກທີ່ສຳຄັນຕໍ່ ການດຳລົງຊີວິດຂອງສິ່ງມີຊີວິດໃນແຫຼ່ງນ້ຳ.
    - ຜົນກະທົບ: ຖ້າຄ່າ **DO** ໜ້ອຍ ສິ່ງທີ່ມີຊີວິດໃນນ້ຳແມ່ນບໍ່ສາມາດດາລົງຊີວິດຢູ່ໄດ້.
11. **ຄວາມຕ້ອງການອົກຊີເຈນທາງດ້ານຊີວະ Biochemical Oxygen Demand ($BOD_5$)** ແມ່ນ ປະລິມານ ອົກຊີເຈນ ທີ່ຈຸລິນຊີຕ້ອງການໃຊ້ໃນການຍ່ອຍສະລາຍ ທາດອົງຄະທາດໃນນ້ຳທີ່ອຸນນະພູມ 20 ອົງສາເຊລເຊສ (°C) ເປັນໄລຍະເວລາ 5 ວັນ.
    - ຜົນກະທົບ: ຄ່າ **$BOD_5$** ເປັນຕົວຊີ້ບອກຄຸນນະພາບຂອງນ້ຳ ຖ້າຄ່າ **$BOD_5$** ສູງ ແມ່ນນ້ຳບໍ່ສະອາດຍ້ອນມີສານອົງຄະທາດໃນນ້ຳຫຼາຍ ແລະ ສິ່ງທີ່ມີຊີວິດບໍ່ສາມາດດຳລົງຊີວິດຢູ່ໄດ້.
12. **ຄວາມຕ້ອງການອົກຊີເຈນທາງດ້ານເຄມີ Chemical Oxygen Demand (COD)** ແມ່ນ ປະລິມານອົກຊີເຈນ ທີ່ໃຊ້ເຂົ້າໃນການຍ່ອຍທາດອົງຄະທາດ ດ້ວຍການໃຊ້ທາດເຄມີເພື່ອວິເຄາະນ້ຳເປື້ອນຕ່າງໆໃນຫ້ອງທົດລອງ ໂດຍທົ່ວໄປຄ່າ **COD** ຈະມີຄ່າຫຼາຍກວ່າ **BOD.**
    - ຜົນກະທົບ: ຄ່າ **COD** ເປັນຕົວຊີ້ບອກຄຸນນະພາບຂອງນ້ຳ ຄືກັບ **$BOD_5$** ແມ່ນນ້ຳບໍ່ສະອາດ ຍ້ອນມີສິ່ງປົນເປື້ອນໃນນ້ຳຫຼາຍ ແລະ ສິ່ງທີ່ມີຊີວິດບໍ່ສາມາດດຳລົງຊີວິດຢູ່ໄດ້.

13. **ຄ່າຊັກນຳກະແສໄຟຟ້າ Electrical conductivity (EC)** ແມ່ນຄວາມສາມາດຂອງນ້ຳໃນການຊັກນຳກະແສໄຟຟ້າໃຫ້ໄຫຼຜ່ານ ເຊິ່ງຂຶ້ນກັບຄວາມເຂັ້ມຂຸ້ນຂອງ ໄອອ່ອນລວມໃນນ້ຳ.
   - ຜົນກະທົບ: ຄ່າ **EC** ເປັນຕົວຊີ້ບອກ ປະລິມານໄອອ່ອນຂອງສິ່ງເຈືອປົນໃນນ້ຳ ຖ້າຄ່າ **EC** ສູງ ນ້ຳໃນສາຍນ້ຳນັ້ນມີປະລິມານສູງ
14. **ທາດແຂງລະລາຍໃນນ້ຳ Total Dissolved Solids (TDS)** ແມ່ນປະລິມານທາດແຂງຂະໜາດນ້ອຍໃນນ້ຳທັງໝົດ ທີ່ໄຫຼຜ່ານເຈ້ຍຕອງມາດຕະຖານ ເຊິ່ງຄິດໄລ່ໄດ້ຈາກ ການລະເຫີຍນ້ຳທີ່ຜ່ານເຈ້ຍຕອງອອກໄປ
   - ຜົນກະທົບ: ເຮັດໃຫ້ມີທາດແຂວນລອຍເຈືອປົນຢູ່ໃນນ້ຳ ແລະ ມີການປ່ຽນແປງໄປຕາມອຸນນະພູມ.
15. **ທາດແຂງແຂວນລອຍ Total Suspended Solids (TSS)** ແມ່ນ ປະລິມານທາດແຂງ ທີ່ຢູ່ເທິງເຈ້ຍຕອງມາດຕະຖານ ເຊິ່ງຄິດໄລ່ໄດ້ຈາກ ການນຳເອົາເຈ້ຍຕອງມາອົບ ເພື່ອໃຫ້ນ້ຳລະເຫີຍອອກໄປ
   - ຜົນກະທົບ: ເຮັດໃຫ້ນ້ຳຂຸ່ນມົວ ບົດບັງແສງທີ່ສ່ອງລົງສູ່ນ້ຳ
16. **ອຸນຫະພູມຂອງນ້ຳ Temperature ($t^{\circ C}$)** ແມ່ນ ລະດັບຄວາມຮ້ອນຂອງນ້ຳ, ນ້ຳທີ່ປ່ອຍອອກສູ່ ແຫຼ່ງນ້ຳທຳມະຊາດ ເຊິ່ງອາດຈະສົ່ງຜົນກະທົບຕໍ່ ສິ່ງມີຊີວິດໃນນ້ຳ ທັງ ທາງກົງ ແລະ ທາງອ້ອມ
   - ຜົນກະທົບ: ໃນກໍລະນີທີ່ອຸນນະພູມຂອງນ້ຳທີ່ປ່ອຍອອກສູງເກີນໄປ ແລະ ອາດຍັງມີຜົນເຮັດໃຫ້ການລະ ລາຍອົກຊີເຈນໃນນ້ຳ ຫຼຸດລົງ
17. **ແຄັດມຽມ Cadmium (Cd)** ແມ່ນໂລຫະໜັກທີ່ມີສີຂາວເຫຼືອມ, ສີເງິນອ່ອນໆ ບໍ່ມີກິ່ນ
   - ຜົນກະທົບ: ມີຜົນກະທົບຕໍ່ທາງເດີນຫາຍໃຈ, ປອດອັກເສບ, ໄຕຖືກທຳລາຍ ເຮັດໃຫ້ເສຍຊີວິດໄດ້.
18. **ບາຫຼອດ Mercury (Hg)** ເປັນໂລຫະສີຂາວຄ້າຍເງິນ ເປັນທາດແຫຼວໃນອຸນຫະພູມປົກກະຕິ.
   - ຜົນກະທົບ: ເປັນອັນຕະລາຍຕໍ່ລະບົບປະສາດສ່ວນກາງກໍ່ຄື ສະໝອງ ແລະ ໄຂສັນຫຼັງ ເຮັດໃຫ້ເສຍການຄວບຄຸມ, ປອດອັກເສບ, ເຈັບໜ້າເອິກ, ຖອກທ້ອງ, ວິນຫົວ, ເຮັດໃຫ້ເສຍເລືອດຫຼາຍ ແລະ ອາດຈະເສຍຊີວິດໄດ້.
19. **ໄຮໂດຼເຈນຄຼໍລິກ Hydrogen Chloric (HCl)** ແມ່ນທາດໃນສະພາວະອາຍກົດ
   - ຜົນກະທົບ: ເຮັດໃຫ້ເກີດການລະຄາຍເຄືອງເນື້ອເຍື່ອຂອງດັງ, ຄໍ, ລະບົບຫາຍໃຈສ່ວນເທິງ, ເກີດການອຸດຕັນຂອງລະບົບຫາຍໃຈ ເຮັດໃຫ້ຫົວໃຈວາຍ ແລະ ອາດເສຍຊີວິດໄດ້.
20. **ໄຮໂດຼເຈນຟູອໍລິກ Hydrogen Fluoric (HF)** ແມ່ນທາດໃນສະພາວະອາຍກົດ ທີ່ມີກິ່ນຂົວແສບ.
   - ຜົນກະທົບ: ເປັນອັນຕະລາຍຕໍ່ເນື້ອເຍື່ອຂອງລະບົບຫາຍໃຈ, ໄອ, ແສບດັງແສບຄໍ, ຫຼອດລົມຕີບ, ປອດອັກເສບ.
21. **ໄດອ໊ອກຊິນ (Dioxins)** ແມ່ນກຸ່ມສານເຄມີທີ່ເກີດຈາກການເຜົາໄໝ້ທີ່ບໍ່ສົມບູນ ຫຼື ຂະບວນການຜະລິດທີ່ກ່ຽວຂ້ອງກັບ Chlorine.
   - ຜົນກະທົບ: ມີຜົນກະທົບຕໍ່ຕັບ, ລະບົບພູມຄຸ້ມກັນຂອງຮ່າງກາຍ, ລະບົບປະສາດ, ລະບົບສືບພັນ ແລະ ເປັນມະເຮັງໄດ້.
22. **ໄຮໂດຼເຈນຊັລໄຟດ໌ Hydrogen Sulfide ($H_2S$)** ແມ່ນທາດອາຍ ມີກິ່ນເໝັນຄືໄຂ່ເນົ່າ ຕິດໄຟໄດ້ງ່າຍ.
   - ຜົນກະທົບ: ເກີດການລະຄາຍເຄືອງຕໍ່ເນື້ອເຍື່ອ, ຈະໄປທຳລາຍປອດ, ໄຕ, ລະບົບທາງເດີນອາຫານ, ລະບົບຂັບຖ່າຍ ແລະ ສົ່ງຜົນຕໍ່ເດັກໃນທ້ອງໄດ້.
23. **ໄຊລີນ Xylene** ($C_8H_{10}$) ແມ່ນທາດແຫຼວ ແລະ ໄວໄຟ

- ຜົນກະທົບ: ເປັນອັນຕະລາຍເມື່ອກິນເຂົ້າໄປອາດຕາຍໄດ້, ເມື່ອເຂົ້າທາງລະບົບຫາຍໃຈ ມີຜົນຕໍ່ລະບົບທາງເດີນຫາຍໃຈ ແລະ ສໍາພັດເຮັດໃຫ້ລະຄາຍເຄືອງຜິວໜັງ.

24. **ຄຼີໂຊລ Cresol** ($C_7H_8O$) ມີກິ່ນຄືກັບນໍ້າຢາຂ້າເຊື້ອໂລກ
    - ຜົນກະທົບ: ເຮັດໃຫ້ລະຄາຍເຄືອງຜິວໜັງ, ຕາ, ປາກ, ຄໍ ແລະ ອາດເປັນສານກໍ່ມະເຮັງໄດ້.
25. **ອັງຕິມ້ອນ Antimony (Sb)** ແມ່ນທາດເຄິ່ງໂລຫະ ເປັນແກັສພິດຮ້າຍແຮງຊະນິດໜຶ່ງ.
    - ຜົນກະທົບ: ມີອາການໄອ, ເປັນຜື່ນແດງ, ເຈັບປວດຕາມຜິວໜັງ, ເປັນສານກໍ່ມະເຮັງໄດ້.
26. **ອາເຊນິກ Arsenic (As)** ເປັນທາດເຄິ່ງໂລຫະ ເຊິ່ງສາມາດພົບໄດ້ໃນທໍາມະຊາດ.
    - ຜົນກະທົບ: ມີອາການເຈັບຫົວ, ຖອກທ້ອງ, ກ້າມເນື້ອເຄັ່ງ, ຜິວໜັງໜາຂຶ້ນ, ມີຈຸດດ່າງດໍາທີ່ຜິວໜັງ, ຊາຕາມປາຍມືປາຍຕີນ, ອາດເປັນມະເຮັງຜິວໜັງ ແລະ ປອດ, ມີຜົນຕໍ່ເດັກໃນທ້ອງເຮັດໃຫ້ບໍ່ສົມບູນ.
27. **ທອງ Copper (Cu)** ແມ່ນໂລຫະທີ່ສາມາດພົບໄດ້ຕາມທໍາມະຊາດ.
    - ຜົນກະທົບ: ມີອາການເຈັບຫົວ, ປວດຮາກ, ຖອກທ້ອງ, ເກີດການອັກເສບໃນຊ່ອງທ້ອງ ແລະ ກ້າມເນື້ອ, ເຮັດໃຫ້ການເຮັດວຽກຂອງຫົວໃຈ ແລະ ຕັບຜິດປົກກະຕິ, ເປັນສາເຫດການເກີດໂຣກເລືອດຈາງ.
28. **ຄຼໍລີນ Chlorine (Cl)** ແມ່ນທາດອາຍ ມີສີເຫຼືອງ ກິ່ນຂົວ.
    - ຜົນກະທົບ: ທໍາລາຍລະບົບປະສາດ, ເນື້ອເຍື່ອຕ່າງໆ
29. **ສີ (Color) ແລະ ຄວາມຂຸ່ນ (Turbidity)** ໝາຍເຖິງ ທາດແຂວນລອຍຕ່າງໆ ທີ່ເກີດຂຶ້ນຢູ່ໃນນໍ້າເຊັ່ນ: ດິນ, ຕະກອນ, ທາດອິງຄະທາດ, ທາດອະນົງຄະທາດ, ແພງຕອນ ແລະ ສິ່ງມີຊີວິດຂະໜາດນ້ອຍ
    - ຜົນກະທົບ: ບົດບັງແສງທີ່ສ່ອງລົງສູ່ນໍ້າ
30. **ລົດ (Taste)** ນໍ້າຕາມທໍາມະຊາດແມ່ນບໍ່ມີລົດຊາດ (ຈືດ) ຖ້າລົດຂອງນໍ້າປ່ຽນໄປຈາກນີ້ເຊັ່ນ ສົ້ມ ຫຼື ເຄັມ ອາດເປັນນໍ້າເປື້ອນ ບໍ່ສາມາດນໍາມາບໍລິໂພກໄດ້
31. **ເຫຼັກ Iron (Fe)**
    - ຜົນກະທົບ: ຖ້າໄດ້ຮັບໃນປະລິມານຫຼາຍຈະເຮັດໃຫ້ເກີດພາວະເຫຼັກເປັນພິດ ເຮັດໃຫ້ ປວດຮາກ, ຖອກທ້ອງ, ຖ່າຍເປັນເລືອດ ລວມເຖິງເກີດແຜເປື່ອຍໃນກະເພາະອາຫານ ແລະ ເກີດການສູນເສຍນໍ້າຢ່າງຮຸນແຮງເຮັດໃຫ້ເສຍຊີວິດໄດ້.
32. **ແມັງການີສ Manganese (Mn)** ເປັນໂລຫະສີຂາວຄ້າຍຄືເງິນ ແລະ ແຕກໄດ້ງ່າຍ ພົບໄດ້ໃນທໍາມະຊາດຊຶ່ງຈະຮ່ວມໂຕກັບທາດອື່ນໆ
    - ຜົນກະທົບ: ມັກເກີດເປັນພິດຊໍາເຮື້ອ ກັບລະບົບປະສາດສ່ວນກາງເປັນໄລຍະ, ເຮັດໃຫ້ປວດຫົວ, ກ້າມເນື້ອບໍ່ມີແຮງ, ນອນບໍ່ຫຼັບ, ເກີດອາການກະຕຸກ, ບາງເທື່ອອາດມີອາການອໍາມະພາດຂອງຮ່າງກາຍບາງສ່ວນ.
33. **ສັງກະສີ Zinc (Zn)** ເປັນທາດສີເງິນ ມັນວາວ ໃຊ້ໃນພາກອຸດສາຫະກໍາຫຼາຍ ແລະ ເປັນແຮ່ທາດຈໍາເປັນທີ່ພົບໃນມະນຸດ ແລະ ສັດ ຊຶ່ງຊ່ວຍກະຕຸ້ນການສ້າງ ແລະ ສ້ອມແປງໜັງກໍາພ້າ, ກະຕຸ້ນການສັງເຄາະຄອລລາເຈນ, ຊ່ວຍໃນຂະບວນການສ້າງເອັນໄຊດ໌ ແລະ ລະບົບພູມຄຸ້ມກັນ.

- ຜົນກະທົບ: ຝຸ່ນ ຫຼື ອາຍຂອງ ສັງກະສີອົອກໄຊດ໌ ຈະເຮັດໃຫ້ເກີດການລະຕາຍຕໍ່ລະບົບທາງເດີນຫາຍໃຈ ສໍາລັບການສໍາພັດທາງຜິວໜັງເປັນເວລາດົນ ຈະເຮັດໃຫ້ເກີດການອັກເສບຢ່າງຮຸນແຮງ, ເມື່ອຮ່າງກາຍໄດ້ຮັບສານ ແລະ ສະສົມເປັນເວລາດົນຈະເຮັດໃຫ້ເອັນໄຊມ໌ຂອງຕັບຜິດປົກກະຕິ.

34. **ແຄລຊຽມ Calcium (Ca)** ເປັນທາດທີ່ຈໍາເປັນສໍາຫຼັບສິ່ງມີຊີວິດ
    - ຜົນກະທົບ: ການຂາດແຄລຊຽມຈະເຮັດໃຫ້ເກີດໂຣກກະດູກຜ່ອຍ, ກ້າມເນື້ອ ແລະ ປະສາດເກີດອາການກະຕຸກ, ຈັງ, ຊັກ, ການແຂງໂຕຂອງເລືອດຜິດປົກກະຕິ; ການໄດ້ຮັບແຄລຊຽມຫຼາຍເກີນໄປຈະເຮັດໃຫ້ເກີດອາການທ້ອງອືດ, ເປັນນິວໃນໄຕໄດ້.

35. **ແມັກເນຊຽມ Magnesium (Mg)** ເປັນທາດທີ່ເກືອແຮ່ຊ່ວຍໃນການເຮັດວຽກຂອງເອັນໄຊດ໌ຫຼາຍຊະນິດໃນຮ່າງກາຍ ຮ່ວມເຖິງເຊລປະສາດ ແລະ ກ້າມເນື້ອ ຊຶ່ງຮ່າງກາຍຕ້ອງການໃນປະລິມານເລັກໜ້ອຍຕໍ່ມື້.
    - ຜົນກະທົບ: ອາການຈາກການມີແມັກເນຊຽມໃນເລືອດສູງເຮັດໃຫ້ເກີດອາການປວດຮາກ ຖອກທ້ອງ ,ຄວາມດັນເລືອດຕໍ່າ, ຫົວໃຈເຕັ້ນຜິດປົກກະຕິ; ອາການຈາກການມີແມັກເນຊຽມໃນເລືອດຕໍ່າເຮັດໃຫ້ເກີດອາການອ່ອນເພຍ, ຈັງ, ຊັກ, ກ້າມເນື້ອອ່ອນແຮງ.

36. **ຊັລເຟດ Sulfate ($SO_4$)** ເປັນທາດເກີດຈາກເກືອແຮ່ໃນທໍາມະຊາດ ເຮັດໃຫ້ເກີດຄວາມກະດ້າງຂອງນໍ້າ (ນໍ້າກະດ້າງຖາວອນ) ຈຶ່ງມີຄວາມສາຄັນຕໍ່ການປັບສະພາບຂອງນ້ຳ ນອກຈາກນີ້ ຍັງມີເກືອຂອງກົດຊັລຟູລິກ ຫຼື ສານຫຼຸດແຮງຕຶງຜິວ ຊຶ່ງຊ່ວຍໃນການເຮັດຄວາມສະອາດສິ່ງເປິະເປື້ອນຕ່າງໆ ລວມທັງກໍ່ໃຫ້ເກີດຟອງ.

37. **ຟູອໍໄລດ໌ Fluoride (F)** ເປັນທາດທີ່ມີຢູ່ທົ່ວໄປໃນຮ່າງກາຍ ຊຶ່ງມີຫຼາຍໃນກະດູກ ແລະ ແຂ້ວ
    - ຜົນກະທົບ: ຖ້າໄດ້ຮັບໃນປະລິມານຫຼາຍເຮັດໃຫ້ຄືນໃສ້, ຮາກ, ປວດທ້ອງ ແລະອາດສົ່ງຜົນຕໍ່ລະບົບຫົວໃຈ ແລະ ເສຍຊີວິດໄດ້.

38. **ອັລຄິນເບັນຊີນ ຊັລໂຟເນດ Alkylbenzenesulfonate ($C_{18}H_{29}NaO_3S$)** ເປັນສານເຄມີປະເພດລົດແຮງຕຶງຜິວ ເປັນສ່ວນປະກອບຂອງນໍ້າຢາລ້າງຈານ, ແຟບ.
    - ຜົນກະທົບ: ເປັນສານເຄມີອັນຕະລາຍໜ້ອຍ ເຮັດໃຫ້ເກີດການລະຄາຍເຄືອງ ເມື່ອຮັບປະທານເຂົ້າໄປຈະເກີດອາການເຈັບປາກ ແລະ ລີ້ນ ປວດຮາກ ແລະ ຖອກທ້ອງ ເປັນສານທີ່ບໍ່ຍ່ອຍສະລາຍໃນສະພາບແວດລ້ອມ ຟອງຈາກນໍ້າຢາເຮັດໃຫ້ອົອກຊີເຈນລະລາຍໃນນໍ້າໄດ້ຕໍ່າ ແລະ ກັ້ນແສງອາທິດສ່ອງລົງສູ່ພື້ນນໍ້າ, ເຮັດໃຫ້ນໍ້າເນົ່າເສຍ.

39. **ເຟໂນລ Phenol ($C_6H_6O$)** ເປັນທາດປະກອບໃນກຸ່ມໄຮດ໌ອກຊິລຕໍ່ກັບວົງເບນຊີນ
    - ຜົນກະທົບ: ທໍາລາຍຄຸນນະພາບຂອງນໍ້າ ແລະ ສົ່ງຜົນຕໍ່ສິ່ງທີ່ມີຊີວິດ, ເປັນທາດກໍ່ມະເຮັງ, ເປັນພິດຕໍ່ລະບົບປະສາດສ່ວນກາງ, ໄຕ, ຕັບ ແລະ ມ້າມ, ເມື່ອສໍາຜິດກັບຜິວໜັງຈະເກີດແຜໄໝ້

40. **ເຊເລນຽມ Selenium (Se)** ເປັນທາດທີ່ໃຊ້ປະໂຫຍດໃນອຸດສາຫະກໍາ 3 ປະເພດຄື ອຸດສາຫະກໍາເອເລັກໂຕຣນິກ, ອຸດສາຫະກໍາແກ້ວ ແລະ ເຊຣາມິກ, ອຸດສາຫະກໍາເຫຼັກກ້າ; ເປັນທາດທີ່ມີຄວາມເປັນພິດຕໍ່າແຕ່ສານປະກອບບາງຊະນິດເປັນພິດຮ້າຍແຮງ.
    - ຜົນກະທົບ: ຖ້າໄດ້ຮັບໃນປະລິມານຫຼາຍຈະເຮັດໃຫ້ເກີດອາການປວດຮາກ, ຖອກທ້ອງ, ສູນເສຍເລັບ ແລະ ເສັ້ນຜົມ, ເກີດແຜທີ່ຜິວໜັງ ແລະ ລະບົບປະສາດ.

41. **ໂຄຼມຽມ Chromium Hexavalent ($Cr^{+6}$)** ເປັນໂລຫະທີ່ໃຊ້ໃນອຸດສາຫະກຳຢ່າງກວ້າງຂວາງເຊັ່ນ ອຸດສາຫະກຳຊຸບໂລຫະດ້ວຍໄຟຟ້າ ເປັນທາດແຂງສີເງິນມັນວາວ ບໍ່ມີກິ່ນ ມີຈຸດຫຼອມແຫຼວສູງ ສາມາດຕີຂຶ້ນຮູບໄດ້

- ຜົນກະທົບ: ການຫາຍໃຈເອົາຝຸ່ນລະອອງ ຫຼື ຄວັນຂອງກົດໂຄມິກຈະເຮັດໃຫ້ລະບົບຫາຍໃຈສ່ວນເທິງຖືກທຳລາຍ ແລະ ເປັນມະເຮັງປອດ, ເຮັດໃຫ້ຜິວໜັງອັກເສບ

42. **ໄຊຍາໄນດ໌ Cyanide (CN)** ໝາຍເຖິງໝູ່ຂອງໄຊຍາໄນດ໌ໄອອອນທັງໝົດ ເປັນສານປະກອບຂອງໂລຫະອັລຄາໄລດ໌ ແລະ ໂລຫະໜັກ, ໃນພຶດມັກພົບໃນຮູບກົດໄຮໂດຣໄຊຍານິກ

- ຜົນກະທົບ: ຫຍຸດການຈະເລີນເຕີບໂຕ, ຍັບຍັ້ງຂະບວນການສ້າງ ແລະ ຍ່ອຍສະລາຍຂອງເຊລສິ່ງທີ່ມີຊີວິດ ລວມເຖິງລະບົບຂະບວນການຫາຍໃຈ ແລະ ຫຼອດເລືອດ, ລະບົບປະສາດສ່ວນກາງ.

43. **ບາລຽມ Barium (Ba)**

- ຜົນກະທົບ: ອາຍຂອງບາລຽມເປັນພິດຮຸ່ນແຮງ ສ່ວນສານປະກອບຂອງບາລຽມສາມາດລະລາຍໃນນ້ຳໄດ້ທຸກຊະນິດ, ສານບາງຕົວສາມາດກະຕຸ້ນກ້າມເນື້ອ, ເປັນພິດຕໍ່ຫົວໃຈ, ເຮັດໃຫ້ມີນ້ຳລາຍຫຼາຍກວ່າປົກກະຕິ, ຊີບພະຈອນເຕັ້ນແຮງ, ຄວາມດັນສູງ, ແຂນຂາເປັນອຳມະພາດ, ຖ່າຍເປັນເລືອດ

44. **ເຊື້ອຈຸລິນຊີ Bacteria Standard Plate Count Method** ເປັນຕົວຊີ້ບອກຄວາມເປື້ອນຂອງນ້ຳເນື່ອງຈາກເຊື້ອຈຸລິນຊີຫຼາຍຊະນິດທີ່ກໍ່ໃຫ້ເກີດໂລກ.

- ຜົນກະທົບ: ເມື່ອປົນເປື້ອນລົງສູ່ແມ່ນ້ຳຈະແຜ່ກະຈ່າຍ ແລະ ສົ່ງຜົນຕໍ່ສຸຂະພາບ ຂອງຜູ້ບໍລິໂພກນ້ຳ.

45. **ເຊື້ອໂຄລິຟອມລວມ Total Coliform Bacteria** ເປັນເຊື້ອຈຸລິນຊີທີ່ພົບຢູ່ໃນອາຈົມຂອງຄົນ ແລະ ສັດເລືອດອຸ່ນ ເພາະອາໄສຢູ່ໃນລຳໄສ້ໃຫຍ່ ເຊັ່ນ: *Eschericia* ໂດຍສ່ວນຫຼາຍແມ່ນຈະບໍ່ກໍ່ໃຫ້ເກີດໂລກ

- ຜົນກະທົບ: ເມື່ອປົນເປື້ອນລົງສູ່ແມ່ນ້ຳຈະແຜ່ກະຈ່າຍ ແລະ ສົ່ງຜົນຕໍ່ສຸຂະພາບ ຂອງຜູ້ບໍລິໂພກນ້ຳ.

46. **ເຊື້ອອີໂຄໄລ** ເປັນເຊື້ອຈຸລິນຊີ ທີ່ເຮັດໃຫ້ເກີດໂລກ

- ຜົນກະທົບ: ເມື່ອປົນເປື້ອນລົງສູ່ແມ່ນ້ຳຈະແຜ່ກະຈ່າຍ ແລະ ສົ່ງຜົນຕໍ່ສຸຂະພາບ ຂອງຜູ້ບໍລິໂພກນ້ຳເຮັດໃຫ້ຖອກທ້ອງ ປວດຮາກ, ເປັນໄຂ້, ເມື່ອຍ ແລະ ອ່ອນເພຍ.

47. **ຄວາມກະດ້າງລວມ Total Hardness ($CaCO_3$)** ຄວາມກະດ້າງຂອງນ້ຳທີ່ເກີດຈາກເກືອຂອງແຄັລຊຽມທີ່ລະລາຍຢູ່ໃນນ້ຳ

- ຜົນກະທົບ: ເຮັດໃຫ້ສິ້ນເປືອງທາດຊັກລ້າງ (ແຟັບ) ຍ້ອນການລະລາຍຍາກໃນນ້ຳ ແລະ ເກີດມີຄາບອຸດຕັນເຄື່ອງຈັກທີ່ນຳໃຊ້ເພື່ອການຊັກລ້າງ.

48. **ເງິນ Silver (Ag)** ເປັນໂລຫະ ທີ່ໃຊ້ຜະລິດອຸປະກອນ, ເຄື່ອງປະດັບ ແລະ ນ້ຳຢາຂ້າເຊື້ອໂລກ

- ຜົນກະທົບ: ທາດປະສົມຂອງເງິນເມື່ອເຂົ້າສູ່ຮ່າງກາຍຈະຖືກດູດຊຶມເຂົ້າສູ່ ລະບົບການໝູນວຽນຂອງເລືອດ ແລະ ຖືກລີດິວເຮັດໃຫ້ເງິນຕົກຄ້າງໃນອະໄວຍະວະຕ່າງໆ ເຮັດໃຫ້ຜິວໜັງເກີດຈຸດສີເທົາ

49. **ອາລູມີນຽມ Aluminium (Al)** ເປັນໂລຫະທີ່ມີຄວາມຄົງທົນຕໍ່ຄວາມຮ້ອນ, ການກັດຫ້ຽນ, ນ້ຳໜັກເບົາ ສາມາດສະທ້ອນແສງ ແລະ ຄວາມຮ້ອນໄດ້ດີ

- ຜົນກະທົບ: ເມື່ອໄດ້ຮັບໃນປະລິມານຫຼາຍ ເປັນເວລາຍາວຈະເຮັດໃຫ້ ກະດູກບາງ ແລະ ແຕກຫັກງ່າຍ, ກ້າມເນື້ອແຂນຂາລີບ, ຕິດເຊື້ອງ່າຍ, ໄຕແລະ ອະໄວຍະວະອື່ນໆຖືກທຳລາຍ

50. **ກຳມັນຕະພາບລັງສີ Radioactive** ທາດທີ່ມີພະລັງງານສູງສາມາດແຜ່ລັງສີ ກາຍເປັນອາຕອມທາດໃໝ່ໄດ້

- ຜົນກະທົບ: ຖ້າໄດ້ຮັບໃນປະລິມານຫຼາຍຈະເຮັດໃຫ້ ໂມເລກຸນຂອງນ້ຳ ທາດອົງຄະທາດ ແລະ ອົງນົງຄະທາດໃນຮ່າງກາຍເສຍສົມດູນ ສິ່ງຜົນຕໍ່ເຊລໃນຮ່າງກາຍ ກໍ່ໃຫ້ເກີດຄວາມເຈັບປ່ວຍ ຫຼື ຖ້າໄດ້ຮັບໃນປະລິມານຫຼາຍເຮັດໃຫ້ເສຍຊີວິດໄດ້

51. **ຢາປາບສັດຕູພືດ Pesticide** ໃນກຸ່ມອໍກາໂນຄູໍລີນ ເປັນຢາປາບສັດຕູພືດທີ່ມີຄູໍລີນເປັນອົງປະກອບ
   - ມີຜົນກະທົບຕໍ່ລະບົບປະສາດສ່ວນກາງ ເຮັດໃຫ້ເກີດຄວາມກະວົນກະວາຍ, ວິນວຽນ, ເສຍການຊົງໂຕ, ຊັກກະຕຸກ, ຖ້າໄດ້ຮັບໃນປະລິມານຫຼາຍຈະເຮັດໃຫ້ເກີດອາການຫົວໃຈວາຍ ແລະ ເຮັດໃຫ້ເສຍຊີວິດໄດ້, ປະຈຸບັນແມ່ນຫ້າມມີການນຳໃຊ້ເພາະສາມາດຄົງໂຕຢູ່ໃນສິ່ງແວດລ້ອມໄດ້ດົນ
   - ປະກອບດ້ວຍ ດີດີທີ, ອັລຟາ ບີເຮັດຊີ, ໄດເອລດິນ ແລະ ອັລດິນ, ເຮັບຕະຄູ ແລະ ເຮັບຕະຄູເອັກພອກໄຊດ໌

52. **ນ້ຳມັນ ແລະ ໄຂມັນ Fat, Oil and Grease (FOG)** ເປັນທາດອົງຄະທາດທີ່ໄດ້ຈາກເນື້ອເຍື່ອຂອງພືດ ແລະສັດ ບໍ່ລະລາຍໃນນ້ຳ
   - ຜົນກະທົບ: ເຮັດໃຫ້ນ້ຳເກີດກິ່ນເໝັນ

53. **ຟໍມານດີໄຮດ໌ Formaldehyde** ເປັນທາດທີ່ບໍ່ມີສີ ໃຊ້ໃນອຸດສາຫະກຳສີ ກາວ ແລະ ນ້ຳຢາເຄືອບເຟີນີເຈີໄມ້
   - ຜົນກະທົບ: ຖ້າໄດ້ຮັບໃນປະລິມານໜ້ອຍຈະເຮັດໃຫ້ເກີດການລະຄາຍເຄືອງຕາ, ດັງ ແລະ ລະບົບທາງເດີນຫາຍໃຈ ຖ້າໄດ້ຮັບໃນປະລິມານສູງອາດເຮັດໃຫ້ໝົດສະຕິ ແລະ ເສຍຊີວິດໄດ້, ຜົນກະທົບໄລຍະຍາວ ເຮັດໃຫ້ເກີດມະເຮັງໄດ້

54. **ໄນໂຕຣເຈນລວມ Total Nitrogen (TKN)** ເປັນສານອາຫານທີ່ມີຄວາມສຳຄັນຕໍ່ລະບົບນິເວດ ຊຶ່ງມີສານປະກອບອະນຸພັນເຊັ່ນ ໄນໄຕຼ, ໄນເຕຼດ ແລະ ແອມໂມເນຍ ຊຶ່ງເປັນປຸ໋ຍສຳລັບການຈະເລີນເຕີບໂຕຂອງພືດນ້ຳ
   - ຜົນກະທົບ: ເຮັດໃຫ້ອົອກຊີເຈນໃນນ້ຳຫຼຸດລົງ ຊຶ່ງເກີດຈາກຂະບວນການເຜົາຜານອາຫານຂອງຈຸລິນຊີ , ເຮັດໃຫ້ເກີດພືດນ້ຳຫຼາຍເກີນ, ແອມໂມເນຍ ເປັນພິດຕໍ່ສັດນ້ຳໂດຍກົງ, ໄນໄຕຼເຮັດໃຫ້ເກີດບັນຫາໃນການລຳລຽງແກ໋ສໃນເລືອດ.

55. **ສານອົງຄະທາດລະເຫີຍ Volatile Organic Compound (VOCs)** ເປັນທາດປະກອບອົງຄະທາດລະເຫີຍ ໃນອຸນະພູມປົກກະຕິໂດຍທົ່ວໄປຈະເປັນທາດແຫຼວ, ມີກິ່ນຂີວ, ລະເຫີຍໄດ້ງ່າຍ, ໄວໄຟ
   - ຜົນກະທົບ: ສາມາດດູດຊຶມເຂົ້າທາງຜິວໜັງ, ດັງ, ປາກ ເຮັດໃຫ້ປ່ວຍເປັນໂລກທາງເດີນຫາຍໃຈ, ອ່ອນເພຍ, ທຳລາຍລະບົບປະສາດ ຖ້າໄດ້ຮັບເປັນເວລາດົນເຮັດໃຫ້ເກີດມະເຮັງໄດ້

56. **ເບັນໂຊ (ເອ) ໄພຣີນ Benzo (A) pyrene ($C_{20}H_{12}$)** ເປັນທາດປະກອບໃນກຸ່ມ ໂພລີໄຊຄລິກ ອາໂລມາຕິກ ໄຮໂດຼຄາຣ໌ບອນ **PAHs** ເກີດຈາກການເຜົາໄໝ້ທີ່ບໍ່ສົມບູນຂອງທາດອົງທະທາດ ການໃຊ້ເຕົາເຜົາທີ່ມີຖ່ານຫີນ ແລະ ໄມ້ເປັນເຊື້ອໄຟ
   - ຜົນກະທົບ: ເປັນທາດທີ່ກໍ່ໃຫ້ເກີດມະເຮັງ ແລະ ການກາຍພັນ

57. **ພີຊີບີ Polychlorobiphenyls (PCBs)** ເປັນກຸ່ມທາດເຄມີທີ່ມີ ຄູໍລີນ ເປັນອົງປະກອບຫຼັກ ເປັນທາດທີ່ຖືກສັງເຄາະຂຶ້ນມາ ມີລັກສະນະເປັນທ່ດແຫຼວ ລະລາຍໃນນ້ຳໄດ້ໜ້ອຍ ແຕ່ລະລາຍໄດ້ດີໃນໄຂມັນ ເປັນທາດທີ່ທົນຕໍ່ການອົອກຊີເດຊັນ ແລະ ທົນຄວາມຮ້ອນໄດ້ດີ ສະລາຍຕົວໄດ້ຍາກໃນສິ່ງແວດລ້ອມ

- ຜົນກະທົບ: ພີຊີບີ ຈະສະສົມໃນຮ່າງກາຍ ເຮັດໃຫ້ເກີດອາການເບື່ອອາຫານ ປວດຮາກ ແຂນແລະຂາເກີດອາການບວມ ເກີດຝີ ແລະ ຕຸ່ມຕາມຜິວໜັງ ເຮັດໃຫ້ເກີດຄວາມຜິດປົກກະຕິຕໍ່ລະບົບສືບພັນ, ລະບົບພູມຄຸ້ມກັນ ແລະ ກໍໃຫ້ເກີດມະເຮັງ

58. **ໄວນີລ ກຼໍໄລດ໌ Vinyl Chloride ($CH_2$=CHCl)** ເປັນແກ໊ສທີ່ບໍ່ມີສີ ເປັນຂອງແຫຼວເມື່ອຢູ່ໃນຖັງອັດຄວາມດັນ ໃຊ້ເປັນວັດຖຸດິບໃນການຜະລິດ PVC
    - ຜົນກະທົບ ເຮັດໃຫ້ເກີດອາການມຶນງົງ ເມື່ອສຳຜັດກັບຜິວໜັງຈະເກີດແຜໄໝ້ ລະຄາຍເຄືອງ, ເຈັບປວດຕາມນິ້ວມື ແລະ ເກີດມະເຮັງຕັບໄດ້